# ຈາກໃຈ

ເຖິງຈະພັດພາກບ້ານ ໜີໄປຢູ່ຄົນທາງ
ເຖິງຈະໜີໄກກັນ ແຕ່ໃຈກໍຍັງໝັ້ນ
ເຖິງຈະໄປຫລາຍປັ້ນ ອາໄສກິນຢູ່ດິນຕ່າງ
ຈິດໃຈຍັງຜູກໝັ້ນ ກົກເຄົ້າໝູ່ເດີມ ຢູ່ນາ

ຄິດຮອດເດ ຄິດຮອດຄາວແຕ່ກີ້ ເມື່ອຍັງຢູ່ເມືອງລາວ
ຄິດຮອດຄາວເຮົາຮຽນ ຢູ່ສະຖາບັນກວ້າງ
ສ້າງຄຣູເປັນສູນເຄົ້າ ໂຮງຮຽນເຮົາສະຖານໃຫຍ່
ຄຣິດຮອດຄາວໜຸ່ມນ້ອຍ ຊົມຊ້ອຍຊື່ນໃຈ ໝູ່ເອີຍ

ຄິດເບິ່ງຄາວຮຽນຮູ້ ນຳຄຣູສະໄໝເກົ່າ
ຄິດເບິ່ງຄາວຢູ່ຫ້ອງ ຮຽນຮູ້ຮ່ວມກັນ
ຄິດເບິ່ງຍາມບ່າຍນັ້ນ ຕຳໝາກຮຸ່ງແຄມທາງ
ຄິດເບິ່ງຍາມຈົບຮຽນ ກໍມ່ວນຍິນເລິງເລື້ອຍ

ບໍ່ເຫິງເຮົາຈະໄດ້ພົບພໍ້ ກັນອີກຫລາຍຄົນ
ບໍ່ເຫິງເຮົາຈະຫັນມາພົບ ໝູ່ເດີມຄາວກີ້
ບໍ່ເຫິງໃຫ້ເຮົາຕຽມໃຈໄວ້ ຄຳນຶງເຖິງອະດີດເກົ່າ
ແລ້ວໃຫ້ເຮົາຕໍ່ຕັ້ງ ເດີນໜ້າ ເພື່ອຜູ້ລຸນ ໝູ່ເອີຍ

ເພື່ອນເອີຍ ເຈົ້າຜູ້ມີລື່ນລົ້ນ ຢ່າລືມໝູ່ຢູ່ເມືອງລາວໃດເນີ
ເຈົ້າຜູ້ສຶກສາສູງ ກໍຢ່າລືມຫລັກເຈັດນ້ອຍ
ເຈົ້າຜູ້ໜີເຫິງແລ້ວ ໃຫ້ຄຳນຶງເຖິງບ້ານເກົ່າແນ່ເດີ
ໝູ່ເອີຍ ຢ່າສູ່ລືມບ່ອນເຄົ້າ ລາວບ້ານເກີດເຮົາ ໝູ່ເອີຍ.

ຫວ່າງແລ້ວ ໄດ້ຍິນສຽງໝູ່ເວົ້າ ມາຜ່ານອິນເທີແນັດ
ໄດ້ຍິນສຽງຫລາຍຄົນ ກໍນ້ຳຕາໄຫລລົ້ນ
ບໍ່ຄິດ ວ່າຈະຍິນຊຸມເຈົ້າ ຄົນເຮົາໂຮງຮຽນເກົ່າ
ບາດວ່າໝູ່ປາກເວົ້າ ໃຈໂລດຄ້ອຍອ່ອນລົງ ແທ້ໃດ

ຂອບໃຈນຳເພື່ອນແກ້ວ ຜູ້ຈັດແຈ່ງສົນທະນາ
ຂອບໃຈນຳຂັນເງິນ ໝູ ແລະສົມສະໜິດນັ້ນ
ຂອບໃຈນຳຊຸມເຈົ້າ ນັກຮຽນລາວໝູ່ເກົ່າ
ຂອບໃຈອົງພຣະເຈົ້າ ທີ່ນຳເຈົ້າໃຫ້ພົບກັນ ໝູ່ເອີຍ

ຮັກ ແລະຄິດເຖິງເພື່ອນນັກຮຽນ ວິດທະຍາໄລ ສ້າງຄຣູຫລັກເຈັດສະເໝີມາ

ອິນທະຫວາ ຫອມອ່ອນ ອິນທິສານ